**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

ເລກທີ:..1374.../ຄຂສພ.ນວ.02.

ນະຄອນຫຼວງວຽງຈັນ, ລົງວັນທີ:..11.../.09./.2023..

**ໜັງສືແຈ້ງການ**

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ;

- ຜູ້ອຳນວຍການ ຮ້ານອາຫານ ອາຊຽນ ໂວກ ແລະ ບາຣ.

ເລື່ອງ: ໂຈະການນຳໃຊ້ທະບຽນວິສາຫະກິດຖາວອນຂອງ ຮ້ານອາຫານ ອາຊຽນ ໂວກ ແລະ ບາຣ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີຂອງບໍລິສັດ ບໍລິຫານເສດຖະກິດພິເສດ ບຶງທາດຫຼວງ ລາວ ຈຳກັດ ສະບັບເລກທີ 016/2023, ລົງວັນທີ 26 ກໍລະກົດ 2023.

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ (ຄຂສພ.ນວ)

ຂໍແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ຊື່ພາສາລາວ: ຮ້ານອາຫານ ອາຊຽນ ໂວກ ແລະ ບາຣ; ຊື່ພາສາສາກົນ: ASIAN WOK RESTAURANT AND BAR, ຖືໃບທະບຽນວິສາຫະກິດ ສະບັບເລກທີ: 116/ຄຂສພ.ນວ, ລົງວັນທີ 06 ກຸມພາ 2023, ໄດ້ຖືກຢຸດການເຄື່ອນໄຫວດຳເນີນທຸລະກິດຖາວອນ ຕາມການສະເໜີຂອງບໍລິສັດ ບໍລິຫານເສດຖະກິດພິເສດ ບຶງທາດຫຼວງ ລາວ ຈຳກັດ. ໃນທຸກປະເພດທຸລະກິດຕາມທີ່ໄດ້ກຳນົດໄວ້ ໃນດ້ານຫຼັງໃບທະບຽນວິສາຫະກິດ ໂດຍອີງໃສ່ບັນຫາຄວາມຫຍຸ້ງຍາກຂອງບໍລິສັດ;
2. ບໍລິສັດກ່າວບໍ່ສາມາດເຄື່ອນໄຫວດຳເນີນກິດຈະການໃດໆໄດ້, ໃນກໍລະນີມີຜູ້ລະເມີດຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ, ຕາມ ມາດຕາ 219 ຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
3. ໃຫ້ ຮ້ານອາຫານ ອາຊຽນ ໂວກ ແລະ ບາຣ ໃນການນຳເອົາໃບທະບຽນວິສາຫະກິດ (ຕົ້ນສະບັບ) ມາມອບຄືນໃຫ້ແກ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຄືນ, ບຸກຄົນ ຫຼື ນິຕິບຸກຄົນໃດຫາກນຳເອົາໃບທະບຽນວິສາຫະກິດ ດັ່ງກ່າວໄປນຳໃຊ້, ນອກຈາກຈະຖືກປະຕິບັດມາດຕະການຕາມ ມາດຕາ 219 ຂອງກົດໝາຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ແລ້ວ, ຍັງຕ້ອງໄດ້ຮັບຜິດຊອບຜົນເສຍຫາຍທັງໝົດທີ່ເກີດຂຶ້ນຕາມກົດໝາຍຂອງ ສປປ ລາວ;
4. ການແຈ້ງຢຸດການເຄື່ອນໄຫວດຳເນີນທຸລະກິດຖາວອນຂອງ ຮ້ານອາຫານ ອາຊຽນ ໂວກ ແລະ ບາຣ ແມ່ນມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ

ນະຄອນຫຼວງວຽງຈັນ

ທະນົງໄຊ ສຸດໄພທູນ